ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ເລກທີ : 865 /ພກພ

ນະຄອນຫລວງວຽງຈັນ, ວັນທີ : 2 SEP 2021

ໜັງສືລາຍງານ

ຮຽນ : ທ່ານ ຜູ້ອຳນວຍການໃຫຍ່ ຕະຫລາດຫລັກຊັບລາວ ທີ່ນັບຖື.

ຮຽນ : ທ່ານ ຫົວໜ້າ ສຳນັກງານ ຄະນະກຳມະການ ຄຸ້ມຄອງຫລັກຊັບ ທີ່ນັບຖື.

ເລື່ອງ: ສະຫຼຸບແຜນລາຍຮັບ Q2 ປີ 2021 ແລະ ແຜນຄາດຄະເນລາຍຮັບ Q3 ປີ 2021.

- ອີງຕາມໜັງສືສະເໜີຂອງ ຕະຫລາດຫລັກຊັບລາວ ເລກທີ 770/ຕລຊລ ລົງວັນທີ 31 ມັງກອນ 2021.
- ອີງຕາມບົດບັນທຶກວິທີ ແລະ ກຳນົດເວລາການແກ້ໄຂບັນຫາຕ່າງໆໃຫ້ແກ່ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ເລກທີ 470/ຕລຊລ ລົງວັນທີ 29 ກໍລະກົດ 2020.

ຂ້າພະເຈົ້າ, ໃນນາມຜູ້ອຳນວຍການ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ຂໍອະນຸຍາດ ລາຍງານລາຍລະອຽດການຈັດຕັ້ງປະຕິບັດແຜນການຂຸດຄົ້ນທ່າແຮງການສ້າງລາຍຮັບ ແລະ ແຜນການຂະຫຍາຍຖານລູກຄ້າ ດັ່ງຕໍ່ລົງໄປນີ້:

I. ສະຫຼຸບແຜນລາຍຮັບໄລຍະສັ້ນ Q2 ປີ 2021

ກ. (ເຈົ້າຂອງໂຄງການ ລັດຖະບານ)

I.1 ແຜນລາຍຮັບ Q2 ປີ 2021 ຍົກໄປຕໍ່ Q3 ປີ 2021

ລ.ດ	ຊື່ໂຄງການ	ມູນຄ່າສັນຍາ (ກີບ)	ປະຕິບັດໄດ້ໃນ ໄລຍະ Q2 ປີ 2021 (ກີບ)	ປະຕິບັດໄດ້ທັງໝົດ (ກີບ)	ຮັບຊຳລະໃນໄລຍະ Q2 ປີ 2021 (ກີບ)	ໄດ້ຮັບຊຳລະທັງໝົດ (ກີບ)	ໝາຍເຫດ
1	ໂຄງການກໍ່ສ້າງທາງຍົກລະດັບ ທາງປູຫີນແຮ່ ແຕ່ ບ້ານກົ່ວ ເຈຍ ຫາ ບ້ານເມືອງຮຶບ	80,881,409,364		39,183,982,905		4,805,140,000	ຍົກແຜນQ2 ປີ 2021 ໄປ ໃສ່ແຜນ Q3 ປີ 2021 ເນື່ອງຈາກມີການແຜ່ລະບາດ ຂອງພະຍາດ COVID-19
2	ໂຄງການກໍ່ສ້າງທາງປູຢາງສອງ ຊັ້ນ ແລະຂົວເບຕົ້ງເສີມເຫຼັກ 6 ແຫ່ງ ແຕ່ ບ້ານອຸ(ເມືອງ ຫຼວງພະບາງ) ຫາ ບ້ານສີບຸນ ເຮືອ(ເມືອງນານ)	343,614,766,665		156,472,134,873		8,331,060,000	ຍົກແຜນQ2 ປີ 2021 ໄປ ໃສ່ແຜນ Q3 ປີ 2021 ເນື່ອງຈາກມີການແຜ່ລະບາດ ຂອງພະຍາດ COVID-19
3	ໂຄງການສ້ອມແປງທາງຫຼວງ ແຫ່ງຊາດເລກທີ 13 ໜ ຊ່ວງແຕ່ ບ້ານກົກຍົ້ວ ຫາ ບ້ານພອນໄຊ	10,570,432,076		4,668,520,948		4,600,000,000	ຍົກແຜນQ2 ປີ 2021 ໄປ ໃສ່ແຜນ Q3 ປີ 2021 ເນື່ອງຈາກມີການແຜ່ລະບາດ ຂອງພະຍາດ COVID-19
4	ໂຄງການສ້ອມແປງທາງຫຼວງ ແຫ່ງຊາດ ເລກທີ 17A ແຂວງຫຼວງນ້ຳທາ, ຊ່ວງແຕ່ ເມືອງຫຼວງນ້ຳທາ ຫາ ເມືອງ ສີງ(ດ່ານປາງໄຮ)	4,485,348,000		3,047,870,000		1,010,673,692	ແຜນ Q2 ປີ 2021 ບໍ່ໄດ້ ປະຕິບັດ ໂຄງການໄດ້ ຍົກເລີກງົບສ້ອມແປງແລະ ໄດ້ປ່ຽນໄປຂຶ້ນແຜນກໍ່ສ້າງ ໃໝ່ແບບຖາວອນ(ສັນຍາເກົ່າ ສິ້ນສຸດລົງ)
	ລວມ	**439,551,956,105**	**0**	**203,372,508,726**	**0**	**18,746,873,692**	

I.1 ແຜນລາຍຮັບ ປະຕິບັດໄດ້ 100% ລໍຖ້າຮັບຊໍາລະຈາກ ລັດຖະບານ

ລ.ດ	ຊື່ໂຄງການ	ມູນຄ່າສັນຍາ (ກີບ)	ປະຕິບັດໄດ້ໃນໄລຍະ Q2 ປີ 2021 (ກີບ)	ປະຕິບັດໄດ້ທັງໝົດ (ກີບ)	ຮັບຊໍາລະໃນໄລຍະ Q2 ປີ 2021 (ກີບ)	ໄດ້ຮັບຊໍາລະທັງໝົດ (ກີບ)	ໝາຍເຫດ
1	ໂຄງການສ້ອມແປງທາງຫຼວງແຫ່ງຊາດ ເລກທີ 1C ແຂວງຫຼວງພະບາງ, ຊ່ວງແຕ່ ເມືອງງອຍ ຫາ ຊາຍແດນເມືອງວຽງຄໍາ	2,252,365,000		2,252,315,050		746,884,235	ປະຕິບັດໄດ້ແລ້ວ 100% ລໍຖ້າຮັບຊໍາລະສ່ວນທີ່ເຫຼືອຈາກລັດຖະບານ
2	ໂຄງການ ປັບປຸງເສັ້ນທາງ ເຫດສະບານ ເມືອງຫຼວງພະບາງ, ແຕ່ ບ້ານໝື່ນນາ-ບ້ານວຽງໃໝ່-ບ້ານທາດໂບສິດ ແລະ ບ້ານນາ ສໍາພັນ-ບ້ານນາຫລວງ	3,308,872,504		3,308,827,154		2,884,940,000	ປະຕິບັດໄດ້ແລ້ວ 100% ລໍຖ້າຮັບຊໍາລະສ່ວນທີ່ເຫຼືອຈາກລັດຖະບານ
3	ໂຄງການ ປັບປຸງເສັ້ນທາງ ເຫດສະບານເມືອງຫລວງພະບາງ ແຕ່ ພະແນກກະສິກໍາແລະປ່າໄມ້ ຫາ ບ້ານສີຖານ	2,235,633,250		2,235,633,250		1,785,840,000	ປະຕິບັດໄດ້ແລ້ວ 100% ລໍຖ້າຮັບຊໍາລະສ່ວນທີ່ເຫຼືອຈາກລັດຖະບານ
4	ໂຄງການ ວຽກແກ້ໄຂທາງ ສັນຈອນ ແບບສຸກເສີນ ແຕ່ສາມ ແຍກບ້ານປາກເຊືອ ຫາ ບ້ານ ປາກວັ່ງ	1,042,303,000		1,042,303,000		566,630,000	ປະຕິບັດໄດ້ແລ້ວ 100% ລໍຖ້າຮັບຊໍາລະສ່ວນທີ່ເຫຼືອຈາກລັດຖະບານ
5	ວຽກແກ້ໄຂສຸກເສີນ ເສັ້ນທາງ ຫຼວງທ້ອງຖິ່ນ ປີ 2020 ເສັ້ນທາງ 3053 ແຕ່ບ້ານ ທອງໜ້ອ (ກິ່ວ ເຈຍ)ເມືອງໂນທອງ ແຂວງຫຼວງ ພະບາງ ຫາຊ/ດປາງຮົກ ຊ/ ດເມືອງໃໝ່ ແຂວງຜົ້ງສາລີ	2,911,425,400		2,911,425,400			ປະຕິບັດໄດ້ແລ້ວ 100% ລໍຖ້າຮັບຊໍາລະ ຈາກລັດຖະບານ
	ລວມ :	**11,750,599,154**	**0**	**11,750,503,854**	**0**	**5,984,294,235**	

II. ແຜນລາຍຮັບໄລຍະກາງໃນປີ 2021

ກ. (ເຈົ້າຂອງໂຄງການ ລັດຖະບານ)

1. ໂຄງການກໍ່ສ້າງທາງຫຼວງແຫ່ງຊາດເລກທີ 13 ເໜືອ ແຕ່ ສີງເປືອຍ ຫາ ໂພນໂຮງ ລວງຍາວ 5 ກມ ມູນຄ່າ 4.500.000.000 ກີບ (ຮັບເໝົາຕໍ່ຈາກບໍລິສັດຈີນ).
2. ໂຄງການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນໄລຍະທີ 2 ຢຸ່ນະຄອນຫຼວງວຽງຈັນ ລວງຍາວ 8.3 ກມ (ຮັບເໝົາຕໍ່ຈາກເກົາຫລີ).
3. ໂຄງການກໍ່ສ້າງທາງຢຸ່ເຂດເສດຖະກິດພິເສດແຂວງຫຼວງພະບາງ ຮັບເໝົາຕໍ່ຈາກ ບໍລິສັດ ພູສີກຸ້ບ ຮ່ວມກັບ ບໍລິສັດເມກາ ຫົງ ກົງ.

ຂ. (ເຈົ້າຂອງໂຄງການ ເອກະຊົນ)

1. ໂຄງການ ບ້ານຈັດສັນໄລຍະແລກ 200 ຫລັງ.
2. ຮັບເໝົາຕໍ່ຊ່ວງກັບ ບໍລິສັດ ພູສີກຸ້ບ ໂຄງການກໍ່ສ້າງພື້ນຖານໂຄງລາງ ເຂດເສດຖະກິດພິເສດ S2 ຊ່ວງທຳອິດ ມູນຄ່າ 2,5 ລ້ານ ໂດລາ

III. ແຜນລາຍຮັບໄລຍະຍາວໃນປີ 2022-2024

ກ. (ເຈົ້າຂອງໂຄງການ ລັດຖະບານ)

1. ໂຄງການກໍ່ສ້າງທາງຫຼວງແຫ່ງຊາດເລກທີ 13 ເໜືອ ແຕ່ ສີງເປືອຍ ຫາ ໂພນໂຮງ ລວງຍາວ 5 ກມ ມູນຄ່າ 4.500.000.000 ກີບ (ຮັບເໝົາຕໍ່ຈາກບໍລິສັດຈີນ).
2. ໂຄງການກໍ່ສ້າງປ້ອງກັນຕະຝັ່ງເຈື່ອນໄລຍະທີ 2 ຢຸ່ນະຄອນຫຼວງວຽງຈັນ ລວງຍາວ 8.3 ກມ (ຮັບເໝົາຕໍ່ຈາກເກົາຫລີ).

ຂ. (ເຈົ້າຂອງໂຄງການ ເອກະຊົນ)

1. ໂຄງການກໍ່ສ້າງທາງຢຸ່ເຂດເສດຖະກິດພິເສດແຂວງຫຼວງພະບາງ ຮັບເໝົາຕໍ່ຈາກ ບໍລິສັດ ພູສີກຸ້ບ ຮ່ວມກັບ ບໍລິສັດເມກາ ຫົງ ກົງ.
2. ໂຄງການບ້ານຈັດສັນໄລຍະສອງ 200 ຫລັງ.
3. ໂຄງການກໍ່ສ້າງທາງດ່ວນວຽງຈັນ-ປາກເຊ, ຊ່ວງທີ 3 ລວງຍາວ 128 ກມ (ແຕ່ ເຊໂນ ແຂວງສະຫວັນນະເຂດ ຫາ ນາປົ່ງ ແຂວງ ສາລະວັນ).
4. ຮັບເໝົາຕໍ່ຊ່ວງກັບ ບໍລິສັດ ພູສີກຸ້ບ ໂຄງການກໍ່ສ້າງພື້ນຖານໂຄງລາງ ເຂດເສດຖະກິດພິເສດ S2 ຊ່ວງສຸດທ້າຍ ມູນຄ່າ 7 ລ້ານ ໂດລາ.

ດັ່ງນັ້ນ, ຈຶ່ງໄດ້ລາຍງານມາຍັງທ່ານເພື່ອຮັບຊາບ.

ຜູ້ອຳນວຍການໃຫຍ່
ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາເມືອງ

ສີທາ ພົມມະຈິດ